ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 801 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 05 OCT 2015

## ຂໍ້ຕົກລົງ

## ກ່ຽວກັບການກຳນົດອັດຕາແລກປ່ຽນອ້າງອີງລະຫວ່າງເງິນກີບກັບເງິນໂດລາສະຫະລັດ ແລະ ການກຳນົດ ອັດຕາແລກປ່ຽນຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ເພື່ອປັບປຸງວິທີການກຳນົດອັດຕາແລກປ່ຽນຂອງລະບົບທະນາຄານເປັນໄປຕາມກົນໄກຕະຫຼາດໃຫ້ມີຄວາມຄ່ອງຕົວດີຂຶ້ນ, ເຮັດໃຫ້ອັດຕາແລກປ່ຽນມີຄວາມສະຫງົບປົກກະຕິ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

**ມາດຕາ 1** ໃຫ້ກົມນະໂຍບາຍເງິນຕາ ສືບຕໍ່ກຳນົດອັດຕາແລກປ່ຽນອ້າງອີງລະຫວ່າງ ເງິນກີບກັບເງິນໂດລາສະຫະລັດ ແລະ ແຈ້ງອັດຕາແລກປ່ຽນອ້າງອີງໃຫ້ບັນດາທະນາຄານທຸລະກິດ ແລະ ຮ້ານແລກປ່ຽນ ພາຍໃນເວລາ 8:15 ໃນແຕ່ລະວັນ ເພື່ອເປັນບ່ອນອີງ ໃຫ້ແກ່ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນ ກຳນົດອັດຕາແລກປ່ຽນຂອງຕົນ.

**ມາດຕາ 2** ອະນຸຍາດໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນ ກຳນົດອັດຕາແລກປ່ຽນຊື້-ຂາຍລະຫວ່າງເງິນກີບກັບເງິນໂດລາສະຫະລັດຂອງຕົນໄດ້ໃນຂອບເຂດບໍ່ເກີນ ±0,25% ທຽບໃສ່ອັດຕາແລກປ່ຽນອ້າງອີງ ທີ່ກົມນະໂຍບາຍເງິນຕາ ປະກາດອອກໃນແຕ່ລະວັນ. ສ່ວນຕ່າງລະຫວ່າງອັດຕາຊື້-ອັດຕາຂາຍບໍ່ເກີນ 0,5%.

**ມາດຕາ 3** ໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນ ເປັນເຈົ້າການໃນການກຳນົດອັດຕາແລກປ່ຽນ ລະຫວ່າງເງິນກີບກັບເງິນຕາຕ່າງປະເທດສະກຸນອື່ນໆດ້ວຍຕົນເອງ. ສ່ວນຕ່າງລະຫວ່າງອັດຕາຊື້-ອັດຕາຂາຍບໍ່ໃຫ້ເກີນ 0,5% ສຳລັບອັດຕາແລກປ່ຽນເງິນກີບກັບເງິນເອີໂຣ, ບໍ່ໃຫ້ເກີນ 0,75% ສຳລັບອັດຕາແລກປ່ຽນເງິນກີບກັບເງິນບາດ, ສ່ວນສະກຸນອື່ນໆແມ່ນບໍ່ໃຫ້ເກີນ 2%.

**ມາດຕາ 4** ກົມນະໂຍບາຍເງິນຕາ ມີໜ້າທີ່ຕິດຕາມການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງໃກ້ຊິດ. ບັນດາທະນາຄານທຸລະກິດ ແລະ ຮ້ານແລກປ່ຽນ ມີໜ້າທີ່ລາຍງານຈຳນວນການຊື້-ຂາຍ ພ້ອມດ້ວຍອັດຕາແລກປ່ຽນທັງອັດຕາຊື້-ອັດຕາຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານທຸລະກິດດ້ວຍກັນ; ທະນາຄານທຸລະກິດກັບ



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

ຮ້ານແລກປ່ຽນ; ຮ້ານແລກປ່ຽນດ້ວຍກັນ ແລະ ການຊື້-ຂາຍຂອງທະນາຄານທຸລະກິດ, ຮ້ານແລກປ່ຽນກັບລູກຄ້າໃນແຕ່ລະວັນ ໃຫ້ທະນາຄານແຫ່ງ ສປປ ລາວ (ກົມນະໂຍບາຍເງິນຕາ) ພາຍໃນເວລາ 15:45 ໂມງ ຂອງແຕ່ລະວັນຢ່າງເຂັ້ມງວດ.

**ມາດຕາ 5** ກົມບໍລິການທະນາຄານ ເປັນຜູ້ກຳນົດອັດຕາແລກປ່ຽນສະກຸນເງິນອື່ນໆໃນແຕ່ລະວັນ ແລະ ແຈ້ງໃຫ້ ທະນາຄານແຫ່ງ ສປປ ລາວ ສາຂາພາກ, ທະນາຄານທຸລະກິດ ແລະ ບັນດາຮ້ານແລກປ່ຽນໃນນະຄອນຫຼວງວຽງຈັນ.

**ມາດຕາ 6** ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 559/ທຫລ, ລົງວັນທີ 28 ກໍລະກົດ 2008. ລະບຽບໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ຜູ້ວ່າການ

**ດຣ. ສົມພາວ ໄຟສິດ**